# ກ່ອນຈະເຖິງເວລາກວດຂອງລູກທ່ານ ຕອນອາຍຸ 2ປີ

ຈົ່ງພິມເອົາສຳເນົາຂອງຟອຣ໌ມ ການຕີຣາຄາເຣື່ອງ ສະຖານະພາບການພັທນາສຳລັບພໍ່ແມ່ (PEDS) ຈາກເວັບໄຊຕ໌ www.mhcs.health.nsw.gov.au ແລະ ຂຽນຕື່ມກ່ອນທີ່ຈະ ໄປຕາມການນັດໝາຍຂອງທ່ານ ຫຼື ຂໍໃຫ້ພະຍາບານອະນາມັຍເດັກຊ່ວຍທ່ານຂຽນ.

ຈົ່ງຕອບຄຳຖາມກ່ຽວກັບລູກຂອງທ່ານເຫຼົ່ານີ້ ກ່ອນທີ່ ຈະໄປຫາພະຍາບານ ຫຼື ນາຍໝໍຂອງທ່ານ

| **ການໄດ້ຍິນສຽງ** | **ແມ່ນ** | **ບໍ່ແມ່ນ** | **ບໍ່ແນ່ໃຈ** |
|---|---|---|---|
| ທ່ານເປັນຫ່ວງຕໍ່ເຣື່ອງການໄດ້ຍິນສຽງຂອງລູກທ່ານບໍ່? | ☐ | ☐ | ☐ |
| ລູກທ່ານເບິ່ງຄືວ່າເຂົ້າໃຈຄຳເວົ້າໃໝ່ໆໃນແຕ່ລະ ອາທິດບໍ່? | ☐ | ☐ | ☐ |
| ລູກທ່ານເຮັດຕາມຄຳບອກແບບງ່າຍໆ ເຊັ່ນ "ໄປເອົາໝາກບານ" ບໍ່? | ☐ | ☐ | ☐ |
| ລູກທ່ານຊີ້ໃສ່ຄົນ ພາກສ່ວນຂອງຮ່າງກາຍ ຫຼື ຂອງຫຼິ້ນ ເວລາບອກໃຫ້ເຮັດ ບໍ່? | ☐ | ☐ | ☐ |
| ລູກທ່ານຮຽນເວົ້າຄຳໃໝ່ໆເລື້ອຍໆບໍ່ ເຖິງແມ່ນວ່າ ຄຳເວົ້ານັ້ນຈະບໍ່ຊັດແຈ້ງ? | ☐ | ☐ | ☐ |
| ລູກທ່ານຟັງນິທານງ່າຍໆ ຫຼື ເພງ ບໍ່? | ☐ | ☐ | ☐ |
| ລູກທ່ານປະສົມຄຳເວົ້າຄຳນຶ່ງ ຫຼື ສອງຄຳໃສ່ກັນ ໃຫ້ເປັນປໂຍກສັ້ນໆ ເຊັ່ນ "ນ້ຳຕື່ມ" ບໍ່? | ☐ | ☐ | ☐ |
| **ສາຍຕາ** | | | |
| ທ່ານເປັນຫ່ວງຕໍ່ເຣື່ອງສາຍຕາຂອງລູກທ່ານບໍ່? | ☐ | ☐ | ☐ |
| ລູກນ້ອຍຂອງທ່ານເປັນຕາເຫຼ່ ຫຼື ຕາເສື້ອງ (ຕາລໍ ຫຼື ຕາເຂ) ບໍ່? | ☐ | ☐ | ☐ |
| ລູກນ້ອຍຂອງທ່ານມີບັນຫາໃນການເບິ່ງເຫັນສິ່ງຂອງ ນ້ອຍໆ ບໍ່? | ☐ | ☐ | ☐ |
| ລູກນ້ອຍຂອງທ່ານຮູ້ຈັກສິ່ງຂອງ ຫຼື ຄົນທີ່ລື້ງເຄີຍ ໂດຍເບິ່ງຈາກທາງໄກ ບໍ່? | ☐ | ☐ | ☐ |
| ມີຄົນໃດຄົນນຶ່ງໃນຄອບຄົວມີບັນຫາດ້ານສາຍຕາບໍ່? | ☐ | ☐ | ☐ |

**ຖ້າຫາກຄຳຕອບຕໍ່ຄຳຖາມເຫຼົ່າວ່າ ແມ່ນ ຈົ່ງບອກ ນາຍໝໍ ຫຼື ພະຍາບານອະນາມັຍເດັກແລະຄອບຄົວ ຂອງທ່ານ**

**ຜົນຮັບ** ☐ ປົກກະຕິ ☐ ແນະນຳສົ່ງຕໍ່ ☐ ທົບທວນເບິ່ງ

# ຫົວຂໍ້ສຳລັບການໂອ້ລົມ ຕອນອາຍຸ 2ປີ

- ຄວາມປອດພັຍຂອງເດັກ ການຄວບຄຸມ ແລະ ການປ່ຽນແປງການເຄື່ອນໄຫວ
- ການກິນອາຫານຂອງຄອບຄົວ
- ການນອນ/ການຕື່ນຕອນກາງຄືນ
- ອາຣົມຮ້າຍ
- ບັນຫາເຣື່ອງອ້າຍນ້ອງ
- ການສູບຢາ
- ການກະທຳຂອງພໍ່ແມ່ ເຊັ່ນ ການສັ່ງສອນລູກ ການຈັດຕັ້ງກົດຂອບເຂດ
- ການຮຽນໄປຫ້ອງສ້ວມຖ່າຍ
- ການດູແລແຂ້ວ
- ການປ້ອງກັນແດດ
- ບ່ອນຮັບຝາກເດັກ/ກຸ່ມຫຼິ້ນ
- ການປະພຶດທີ່ເຮັດໃຫ້ຕົວເອງຮູ້ສຶກສະບາຍ ເຊັ່ນ ການດູດໂປ້ມື ຂອງຫຼິ້ນທີ່ມັກຫຼາຍ ໝາກແວ້
- ການສັກຢາປ້ອງກັນໂຣກ
- ການເວົ້າ ແລະ ພາສາ
- ການອູ້ມຊູຄອບຄົວ ແລະ ບັນຫາອື່ນໆ